ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 10 /ນຍ
ນະຄອນຫລວງວຽງຈັນ, ວັນທີ 05.02.2019.

# ຂໍ້ຕົກລົງ
## ວ່າດ້ວຍການແບ່ງຄວາມຮັບຜິດຊອບ
## ໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ສະບັບ ເລກທີ 098/ສພຊ, ລົງວັນທີ 28 ມິຖຸນາ 2018;
- ອີງຕາມໜັງສືສະເໜີ ສະບັບເລກທີ 6276/ກຊສ, ລົງວັນທີ 05 ທັນວາ 2018 ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ນາຍົກລັດຖະມົນຕີ ອອກຂໍ້ຕົກລົງ:

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດການແບ່ງຄວາມຮັບຜິດຊອບຂອງກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ເພື່ອວາງຍຸດທະສາດ, ຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນ ທີ່ຢູ່ໃນການຄຸ້ມຄອງການນຳໃຊ້ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ບັນລຸເປົ້າໝາຍ ແລະ ຕົວເລກຄາດໝາຍຂອງເນື້ອທີ່ດິນ ທີ່ຈະສະຫງວນ ແລະ ອະນຸລັກໄວ້ ເພື່ອເປັນທີ່ດິນປ່າໄມ້ປົກຫຸ້ມ ເຈັດສິບສ່ວນຮ້ອຍ ແລະ ເນື້ອທີ່ດິນທີ່ຈະນຳໃຊ້ ແລະ ພັດທະນາ ສາມສິບສ່ວນຮ້ອຍ ຕາມທີ່ໄດ້ກຳນົດໄວ້ ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030.

ມາດຕາ 2 ຄວາມຮັບຜິດຊອບຂອງກະຊວງທີ່ກ່ຽວຂ້ອງ

ບັນດາກະຊວງທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ດັ່ງນີ້:

1. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດຊອບ:

1.1. ເປັນໃຈກາງຈັດຕັ້ງປະຕິບັດໂດຍສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອກຳນົດຍຸດທະສາດ, ດຳເນີນການຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນ ໃຫ້ບັນລຸຕາມເປົ້າໝາຍ ແລະ ຕົວເລກຄາດໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແລະ ໃຫ້ສຳເລັດໃນປີ 2020 ເພື່ອສະເໜີຕໍ່ລັດຖະບານ ແລະ ສະພາແຫ່ງຊາດ ພິຈາລະນາຮັບຮອງ;

1.2. ຄຸ້ມຄອງທີ່ດິນລວມສູນ ແລະ ຄົ້ນຄວ້າສະເໜີລັດຖະບານ ກໍານົດການແບ່ງຄວາມຮັບຜິດຊອບການຄຸ້ມຄອງການນໍາໃຊ້ທີ່ດິນໃຫ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ພ້ອມທັງຕິດຕາມ ກວດກາການນໍາໃຊ້ທີ່ດິນ ເພື່ອໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ;

1.3. ສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການສໍາຫຼວດ, ເກັບກໍາຂໍ້ມູນເນື້ອທີ່ດິນແຕ່ລະປະເພດໃນແຕ່ລະເຂດ ທີ່ຢູ່ໃນການຄຸ້ມຄອງການນໍາໃຊ້ທີ່ດິນຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແລ້ວສັງລວມລາຍງານລັດຖະບານ ພິຈາລະນາຮັບຮອງ;

1.4. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນໍາໃຊ້ທີ່ດິນບໍລິເວນນໍ້າ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ຕາມລະບຽບການ;

1.5. ສົມທົບກັບກະຊວງກະສິກໍາ ແລະ ປ່າໄມ້, ບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການຈັດສັນແຫຼ່ງນໍ້າຕາມອ່າງຮັບນໍ້າ ແລະ ການນໍາໃຊ້ທີ່ດິນຕາມຄວາມຄ້ອຍຊັນ ໂດຍການນໍາໃຊ້ຂໍ້ມູນຈາກພາບຖ່າຍດາວທຽມ, ພາບຖ່າຍທາງອາກາດ ແລະ ສໍາຫຼວດພາກສະໜາມ ແລ້ວສ້າງເປັນແຜນທີ່ດິນຈຸລະພາກໃຫ້ສາມາດເຊື່ອມຈອດກັບແຜນທີ່ມະຫາພາກ;

1.6. ປະສານສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ດໍາເນີນການຂຶ້ນສໍາມະໂນທີ່ດິນ ແລະ ຂຶ້ນທະບຽນອອກໃບຕາດິນຂອງລັດ ແລະ ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ ຊຶ່ງນອນໃນເນື້ອທີ່ດິນທີ່ຈະນໍາໃຊ້ ແລະ ພັດທະນາ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;

1.7. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຂອງບັນດາກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນແຕ່ລະໄລຍະ ລວມທັງທົບທວນການປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ທຸກ ຫ້າ ປີ ແລ້ວລາຍງານຕໍ່ລັດຖະບານ;

1.8. ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍທີ່ດິນ, ບັນດາກົດໝາຍທີ່ພົວພັນກັບທີ່ດິນ ລວມທັງນິຕິກໍາໃຕ້ກົດໝາຍດັ່ງກ່າວ ໂດຍໃຫ້ສອດຄ່ອງກັບລັດຖະທໍາມະນູນ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

1.9. ຄຸ້ມຄອງ ແລະ ຕິດຕາມ ກວດກາ ພ້ອມທັງຄົ້ນຄວ້າອອກມາດຕະການແກ້ໄຂບັນຫາການຈັບຈອງທີ່ດິນ, ການຄອບຄອງທີ່ດິນທີ່ຜິດກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນຢ່າງເຂັ້ມງວດ ແລະ ເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ;

1.10. ຄົ້ນຄວ້າການສະເໜີຫັນປ່ຽນທີ່ດິນ ຈາກປະເພດໜຶ່ງໄປເປັນທີ່ດິນປະເພດອື່ນ ເພື່ອຮັບປະກັນຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ໃຫ້ມີຜົນກະທົບທາງລົບໜ້ອຍທີ່ສຸດຕໍ່ສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ;

1.11. ສ້າງລະບົບຂໍ້ມູນ ຂ່າວສານກ່ຽວກັບທີ່ດິນດ້ວຍລະບົບທັນສະໄໝ ໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນສະຖິຕິແຫ່ງຊາດ ໂດຍປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການຄຸ້ມຄອງທີ່ດິນມີຄວາມໂປ່ງໃສ, ເປັນບ່ອນອີງໃນການສຶກສາ, ຄົ້ນຄວ້າ ແລະ ວາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ, ຕິດຕາມກວດກາຜົນໄດ້ຮັບຕໍ່ການຄຸ້ມຄອງ ແລະ ການນໍາໃຊ້ທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ຢ່າງມີປະສິດທິພາບ ເພື່ອລາຍງານລັດຖະບານ;

1.12. ປະສານສົມທົບກັບກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າຈັດສັນແຫຼ່ງທຶນ ແລະ ສະໜອງງົບປະມານຈັດຊື້ເຄື່ອງມືວັດຖຸປະກອບຮັບໃຊ້ການສໍາຫຼວດ, ວັດແທກ, ຈັດສັນທີ່ດິນ, ຂຶ້ນສໍາມະໂນທີ່ດິນ ແລະ ຂຶ້ນທະບຽນອອກໃບຕາດິນ;

1.13. ປະສານສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການກວດກາຄືນການນໍາໃຊ້ທີ່ດິນຂອງການຈັດຕັ້ງລັດ, ລວມໝູ່, ບຸກຄົນ ຫຼື ນິຕິບຸກຄົນ ລວມທັງເນື້ອທີ່ດິນທີ່ໃຫ້ເຊົ່າ ແລະ ສໍາປະທານ ໄດ້ນໍາໃຊ້ຖືກຕ້ອງຕາມເປົ້າໝາຍ ແລະ ກົດໝາຍທີ່ກ່ຽວຂ້ອງໄດ້ກໍານົດໄວ້ແລ້ວ ຫຼື ບໍ່ ພ້ອມທັງມີມາດຕະການແກ້ໄຂໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ແລະ ກົດໝາຍທີ່ກໍານົດໄວ້;

1.14. ປະສານສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການກວດກາຄືນການປະຕິບັດໂຄງການພັດທະນາຕ່າງໆ ເພື່ອຜົນປະໂຫຍດສ່ວນລວມຂອງປະເທດຊາດ ລວມທັງການໂອນສິດນໍາໃຊ້ທີ່ດິນຂອງບຸກຄົນ ແລະ ນິຕິບຸກຄົນ ຄືນມາເປັນຂອງລັດ ໃຫ້ປະຕິບັດຢ່າງຖືກຕ້ອງຕາມກົດໝາຍ ແລະ ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທໍາ;

1.15. ປະສານສົມທົບກັບບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດໍາເນີນການກວດກາຄືນການຫັນທີ່ດິນເປັນທຶນ ເພື່ອຮັບປະກັນເຮັດໃຫ້ທີ່ດິນມີມູນຄ່າເພີ່ມຂຶ້ນ ແລະ ບໍ່ໃຫ້ທີ່ດິນຂອງລັດສູນເສຍ, ສ່ວນທີ່ດິນ ແລະ ເຮືອນຂອງລັດ ທີ່ມີຄວາມໝາຍທາງດ້ານປະຫວັດສາດ, ດ້ານການເມືອງ ແລະ ສະຖາປະຕິຍະກໍາເກົ່າແກ່ຂອງຊາດລາວ ໃຫ້ອະນຸລັກຮັກສາໄວ້;

1.16. ກວດກາຄືນ ແລະ ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ທີ່ຈະປະຕິບັດບັນດາໜ້າວຽກງານທີ່ກ່າວມາຂ້າງເທິງນີ້ ແນໃສ່ຮັບປະກັນຄຸນນະພາບ ແລະ ມີມາດຕະຖານຄົບຖ້ວນ;

1.17. ກວດກາ ແລະ ປະເມີນກົນໄກການປະສານງານລະຫວ່າງກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ແລະ ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນແຕ່ລະທ້ອງຖິ່ນ ໃນວຽກງານຄຸ້ມຄອງທີ່ດິນ.

2. ກະຊວງກະສິກໍາ ແລະ ປ່າໄມ້ ຮັບຜິດຊອບ:

2.1. ດໍາເນີນການສໍາຫຼວດ ແລະ ເກັບກໍາຂໍ້ມູນຕົວຈິງ ຂອງເນື້ອທີ່ດິນປ່າໄມ້ ແລະ ເນື້ອທີ່ດິນກະສິກໍາ ທີ່ມີຢູ່ໃນປັດຈຸບັນ ໂດຍສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

2.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນໍາໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກໍາ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງອອກລະບຽບການຄຸ້ມຄອງການນໍາໃຊ້ທີ່ດິນປະເພດດັ່ງກ່າວ;

2.3. ມີມາດຕະການໃນການຄຸ້ມຄອງ ແລະ ຕິດຕາມ ກວດກາການຟື້ນຟູປ່າໄມ້ ແລະ ການປູກໄມ້ທົດແທນ ຕາມສັນຍາພັດທະນາໂຄງການລົງທຶນ ທີ່ລັດຖະບານອະນຸມັດ ເປັນຕົ້ນ ໂຄງການພັດທະນາໄຟຟ້າ, ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອຮັບປະກັນເນື້ອທີ່ປົກຫຸ້ມປ່າໄມ້ ເຈັດສິບສ່ວນຮ້ອຍ ຕາມແຜນການ;

2.4. ດໍາເນີນການສໍາຫຼວດປັກຫຼັກໝາຍກໍານົດຂອບເຂດປ່າສະຫງວນແຫ່ງຊາດ, ແຂວງ ແລະ ເມືອງ, ປ່າປ້ອງກັນ ແລະ ປ່າຜະລິດ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາ; ຄົ້ນຄວ້າຍົກລະດັບປ່າສະຫງວນແຫ່ງຊາດ ບ່ອນທີ່ມີເງື່ອນໄຂໃຫ້ເປັນອຸດທິຍານແຫ່ງຊາດ;

2.5. ດຳເນີນການສຳຫຼວດ, ປະເມີນຄຸນນະພາບດິນ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳແຕ່ລະປະເພດ ພ້ອມທັງຕິດຕາມ ກວດກາການນຳໃຊ້ທີ່ດິນປະເພດດັ່ງກ່າວ ໃຫ້ຖືກຕ້ອງຕາມເປົ້າໝາຍ ເພື່ອຄ້ຳປະກັນດ້ານສະບຽງອາຫານ;

2.6. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;

2.7. ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມກົມກຽວ ແລະ ຄ່ອງຕົວດີຂຶ້ນ ພ້ອມທັງເພີ່ມທະວີການຕິດຕາມກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

2.8. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນປ່າໄມ້ ແລະ ທີ່ດິນກະສິກຳ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມກົດໝາຍ.

3. ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບ:

3.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;

3.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັດນາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

3.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

3.4. ເປັນເຈົ້າການຕິດຕາມກວດກາການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.

4. ກະຊວງພະລັງງານ ແລະ ບໍ່ແຮ່ ມີຄວາມຮັບຜິດຊອບ:

4.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;

4.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

4.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

4.4. ເປັນເຈົ້າການຕິດຕາມກວດກາການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດພະລັງງານ ແລະ ບໍ່ແຮ່ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.

5. ກະຊວງແຜນການ ແລະ ການລົງທຶນ ຮັບຜິດຊອບ:

5.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

5.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

5.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

5.4. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນອຸດສາຫະກຳ ໃນພື້ນທີ່ເຂດເສດຖະກິດພິເສດ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.

6. ກະຊວງໂຍທາທິການ ແລະ ຂົນສົ່ງ ຮັບຜິດຊອບ:

6.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຍົກເວັ້ນທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;

6.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຍົກເວັ້ນທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

6.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຍົກເວັ້ນທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

6.4. ເປັນເຈົ້າການຕິດຕາມກວດກາການຄຸ້ມຄອງການນຳໃຊ້ທີ່ດິນປຸກສ້າງ ແລະ ທີ່ດິນຄົມມະນາຄົມ ຍົກເວັ້ນທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍປະສານສົມທົບກັບກະຊວງ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.

7. **ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຜິດຊອບ:**

7.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

7.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານພິຈາລະນາຮັບຮອງ ພ້ອມທັງ ອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

7.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນຄົມມະນາຄົມສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

7.4. ເປັນເຈົ້າການຕິດຕາມກວດກາການຄຸ້ມຄອງການນຳໃຊ້ທີ່ດິນຄົມມະນາຄົມ ສຳລັບສະຖານທີ່ຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ.

8. ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບ:

8.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນປຸກສ້າງໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງຮຽນ, ສະຖາບັນການສຶກສາ, ຫໍພັກນັກສຶກສາ, ສະໜາມກິລາ ແລະ ກິດຈະການອື່ນ ທີ່ຕິດພັນກັບວຽກງານການສຶກສາ ແລະ ກິລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການສຶກສາທິການ ແລະ ກິລາ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

8.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນປຸກສ້າງໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງຮຽນ, ສະຖາບັນການສຶກສາ, ຫໍພັກນັກສຶກສາ, ສະໜາມກິລາ ແລະ ກິດຈະການອື່ນ ທີ່ຕິດພັນກັບວຽກງານການສຶກສາ ແລະ ກິລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການສຶກສາທິການ ແລະ ກິລາ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງພ້ອມທັງອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

8.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປຸກສ້າງໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງຮຽນ, ສະຖາບັນການສຶກສາ, ຫໍພັກນັກສຶກສາ, ສະໜາມກິລາ ແລະ ກິດຈະການອື່ນ ທີ່ຕິດພັນກັບວຽກງານການສຶກສາ ແລະ ກິລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການສຶກສາທິການ ແລະ ກິລາ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

8.4. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນປຸກສ້າງໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງຮຽນ, ສະຖາບັນການສຶກສາ, ຫໍພັກນັກສຶກສາ, ສະໜາມກິລາ ແລະ ກິດຈະການອື່ນ ທີ່ຕິດພັນກັບວຽກງານການສຶກສາ ແລະ ກິລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການສຶກສາທິການ ແລະ ກິລາ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍ ແລະ ລະບຽບການ;

8.5. ນຳໃຊ້ທີ່ດິນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ຖືກຕ້ອງຕາມລະບຽບການຄຸ້ມຄອງສະເພາະຂອງແຕ່ລະປະເພດທີ່ດິນ ເປັນຕົ້ນ ທີ່ດິນປຸກສ້າງ, ທີ່ດິນກະສິກຳ ພ້ອມທັງສ້າງລະບຽບການຄຸ້ມຄອງທີ່ດິນສະເພາະຂອງຕົນ.

**9. ກະຊວງສາທາລະນະສຸກ ຮັບຜິດຊອບ:**

9.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນປຸກສ້າງ ໃນເຂດພື້ນທີ່ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງໝໍ, ສຸກສາລາ ແລະ ອາຄານ ເພື່ອຮັບໃຊ້ວຽກງານສາທາລະນະສຸກ ທີ່ເປັນຂອງລັດ ລວມທັງທີ່ດິນປູກພືດຢາພື້ນເມືອງ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

9.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນປຸກສ້າງ ໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງໝໍ, ສຸກສາລາ ແລະ ອາຄານ ເພື່ອຮັບໃຊ້ວຽກງານສາທາລະນະສຸກ ທີ່ເປັນຂອງລັດ ລວມທັງທີ່ດິນປູກພືດຢາພື້ນເມືອງ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານພິຈາລະນາຮັບຮອງ ພ້ອມທັງ ອອກລະບຽບການຄຸ້ມຄອງການນຳໃຊ້ທີ່ດິນປະເພດດັ່ງກ່າວ;

9.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປຸກສ້າງ ໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງໝໍ, ສຸກສາລາ ແລະ ອາຄານ ເພື່ອຮັບໃຊ້ວຽກງານສາທາລະນະສຸກ ທີ່ເປັນຂອງລັດ ລວມທັງທີ່ດິນປູກພືດຢາພື້ນເມືອງ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

9.4. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນຳໃຊ້ທີ່ດິນປຸກສ້າງ ໃນເຂດພື້ນທີ່ ທີ່ນຳໃຊ້ເຂົ້າໃນເປົ້າໝາຍປຸກສ້າງໂຮງໝໍ, ສຸກສາລາ ແລະ ອາຄານ ເພື່ອຮັບໃຊ້ວຽກງານສາທາລະນະສຸກ ທີ່ເປັນຂອງລັດ ລວມທັງທີ່ດິນປູກພືດຢາພື້ນເມືອງ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

9.5. ນຳໃຊ້ທີ່ດິນ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ຖືກຕ້ອງຕາມລະບຽບການຄຸ້ມຄອງສະເພາະຂອງແຕ່ລະປະເພດທີ່ດິນ ເປັນຕົ້ນ ທີ່ດິນປຸກສ້າງ, ທີ່ດິນກະສິກຳ ພ້ອມທັງສ້າງລະບຽບການຄຸ້ມຄອງທີ່ດິນສະເພາະຂອງຕົນ.

**10. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮັບຜິດຊອບ:**

10.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນວັດທະນະທຳ ໂດຍສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

10.2. ຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນວັດທະນະທຳ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງ

ແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງ ອອກລະບຽບການຄຸ້ມຄອງການນໍາໃຊ້ທີ່ດິນປະເພດດັ່ງກ່າວ;

10.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນວັດທະນະທໍາ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

10.4. ເປັນເຈົ້າການຕິດຕາມ ກວດກາການຄຸ້ມຄອງການນໍາໃຊ້ທີ່ດິນວັດທະນະທໍາ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ.

11. **ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຮັບຜິດຊອບ:**

11.1. ດໍາເນີນການສໍາຫຼວດ ແລະ ເກັບກໍາຂໍ້ມູນເນື້ອທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແຕ່ຕ້ອງຮັບປະກັນວຽກງານດ້ານຍຸດທະສາດການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

11.2. ຄົ້ນຄວ້າສ້າງແຜນຍຸດທະສາດ, ວາງແຜນການນໍາໃຊ້ທີ່ດິນ ແລະ ລະບຽບການການຄຸ້ມຄອງການນໍາໃຊ້ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ຈຸດພິເສດທີ່ຕັ້ງພູມສັນຖານຂອງແຕ່ລະທ້ອງຖິ່ນ ແລ້ວສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ ພ້ອມທັງ ອອກລະບຽບການຄຸ້ມຄອງການນໍາໃຊ້ທີ່ດິນປະເພດດັ່ງກ່າວ;

11.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສ່ວນທີ່ບໍ່ພົວພັນກັບເຂດຍຸດທະສາດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຕາມກົດໝາຍ;

11.4. ເປັນເຈົ້າການ ຕິດຕາມກວດກາການຄຸ້ມຄອງການນໍາໃຊ້ທີ່ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ.

12. **ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຮັບຜິດຊອບ:**

12.1. ເຂົ້າຮ່ວມ ແລະ ໃຫ້ການຮ່ວມມືກັບບັນດາກະຊວງທີ່ກ່າວມາເທິງນັ້ນ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ໃຫ້ສໍາເລັດຕາມແຜນການ ແລະ ຄາດໝາຍ;

12.2. ສະໜອງຂໍ້ມູນທີ່ດິນທີ່ຢູ່ໃນການຄຸ້ມຄອງ ແລະ ນໍາໃຊ້ຂອງຕົນໃຫ້ບັນດາກະຊວງທີ່ກ່ຽວຂ້ອງ ເພື່ອສັງລວມເຂົ້າໃນການວາງແຜນນໍາໃຊ້ທີ່ດິນແຕ່ລະປະເພດ ຕາມກົດໝາຍ;

12.3. ປຸກລະດົມໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນເຂົ້າໃຈ ທັງປະກອບສ່ວນ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ.

**ມາດຕາ 3 ຄວາມຮັບຜິດຊອບຂອງອົງການປົກຄອງທ້ອງຖິ່ນ**

1. ອົງການປົກຄອງແຂວງ, ນະຄອນຫຼວງ ມີຄວາມຮັບຜິດຊອບໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ດັ່ງນີ້:

1.1. ດຳເນີນການສຳຫຼວດ ແລະ ເກັບກຳຂໍ້ມູນເນື້ອທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງທ້ອງຖິ່ນຕົນ ເພື່ອກຳນົດຍຸດທະສາດ, ດຳເນີນການຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນໃຫ້ບັນລຸຕາມເປົ້າໝາຍ ແລະ ຕົວເລກຄາດໝາຍ ແລະ ສຳເລັດໃນປີ 2020;

1.2. ຄົ້ນຄວ້າສ້າງແຜນຈັດສັນທີ່ດິນທ້ອງຖິ່ນ, ແຜນຍຸດທະສາດ ແລະ ວາງແຜນການນຳໃຊ້ທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບທ້ອງຖິ່ນຕົນ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ, ແຜນຍຸດທະສາດ ແລະ ແຜນນຳໃຊ້ທີ່ດິນຂອງຂະແໜງການ, ຈຸດພິເສດທ່າແຮງທາງດ້ານຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານໃນທ້ອງຖິ່ນຕົນ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວສະເໜີໃຫ້ສະພາປະຊາຊົນ ຂັ້ນແຂວງ ພິຈາລະນາຮັບຮອງ ແລ້ວລາຍງານໃຫ້ລັດຖະບານ;

1.3. ສ້າງຖານຂໍ້ມູນ ແລະ ສະໜອງຂໍ້ມູນທີ່ດິນໃນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ທີ່ຢູ່ໃນການຄຸ້ມຄອງການນຳໃຊ້ຂອງພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມລາຍງານລັດຖະບານ;

1.4. ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຈັດສັນທີ່ດິນ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງພະແນກການ, ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ໃນທຸກ ຫ້າ ປີ ແລ້ວລາຍງານຕໍ່ສະພາປະຊາຊົນ ຂັ້ນແຂວງ ແລະ ລັດຖະບານ;

1.5. ສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງ ຂັ້ນແຂວງ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ພ້ອມທັງເພີ່ມທະວີການຕິດຕາມກວດກາ ແລະ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ;

1.6. ເປັນເຈົ້າການ ຕິດຕາມກວດກາການຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະເຂດ, ແຕ່ລະປະເພດທີ່ດິນ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບັນດາກະຊວງທີ່ກ່ຽວຂ້ອງ ພ້ອມທັງ ມີມາດຕະການແກ້ໄຂເດັດຂາດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຈັບຈອງທີ່ດິນ, ຄອບຄອງທີ່ດິນທີ່ຜິດກົດໝາຍ ແລະ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ຢູ່ໃນຄວາມຮັບຜິດຊອບທ້ອງຖິ່ນຕົນ ຢ່າງເຂັ້ມງວດ;

1.7. ກວດກາຄືນ ແລະ ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ ທີ່ຈະປະຕິບັດບັນດາໜ້າວຽກງານທີ່ກ່າວມາຂ້າງເທິງນີ້ ແນໃສ່ຮັບປະກັນຄຸນນະພາບ ແລະ ມີມາດຕະຖານຄົບຖ້ວນ;

1.8. ກວດກາ ແລະ ປະເມີນກົນໄກການປະສານງານລະຫວ່າງພະແນກການພາຍໃນແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ ແລະ ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ປະຊາຊົນໃນແຕ່ລະທ້ອງຖິ່ນ ເຂົ້າໃນວຽກງານຄຸ້ມຄອງທີ່ດິນ;

1.9. ຈັດຕັ້ງໂຄສະນາ ແລະ ເຜີຍແຜ່ວຽກງານການຄຸ້ມຄອງທີ່ດິນ ໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຕາມກົດໝາຍ.

**2. ອົງການປົກຄອງເມືອງ, ເທດສະບານ, ນະຄອນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ:**

2.1. ເຂົ້າຮ່ວມ ແລະ ໃຫ້ການຮ່ວມມື ກັບອົງການປົກຄອງແຂວງ, ນະຄອນຫຼວງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030 ໃຫ້ສຳເລັດຕາມແຜນການ ແລະ ຄາດໝາຍ;

2.2. ສະໜອງຂໍ້ມູນທີ່ດິນທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ໃຫ້ອົງການປົກຄອງແຂວງ, ນະຄອນຫຼວງເພື່ອສັງລວມເຂົ້າໃນການຈັດສັນທີ່ດິນ ແລະ ວາງແຜນນຳໃຊ້ທີ່ດິນແຕ່ລະປະເພດ ຕາມກົດໝາຍ;

2.3. ປຸກລະດົມໃຫ້ທຸກພາກສ່ວນໃນສັງຄົມ ແລະ ປະຊາຊົນໃນທ້ອງຖິ່ນຂອງຕົນ ເຂົ້າໃຈທັງປະກອບສ່ວນ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ.

### ມາດຕາ 4 ລະບອບການລາຍງານ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງ ແລະ ສົມທົບກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ມີໜ້າທີ່ຮັບຜິດຊອບໂດຍກົງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ດຳເນີນການປະເມີນຜົນ ແລະ ລາຍງານການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໃຫ້ລັດຖະບານ ພິຈາລະນາ ໃນແຕ່ລະໄລຍະ ດັ່ງນີ້:

1. ລາຍງານຄວາມຄືບໜ້າ ໃນຄັ້ງທີ ໜຶ່ງ ໃນເດືອນ ມິຖຸນາ 2019;
2. ລາຍງານຜົນສຳເລັດທັງໝົດ ກ່ອນເດືອນ ກໍລະກົດ 2020 ເພື່ອນຳສະເໜີຜ່ານກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ ໃນເດືອນ ຕຸລາ ຂອງປີດຽວກັນ.

### ມາດຕາ 5 ການຈັດຕັ້ງປະຕິບັດ

ບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 2 ແລະ 3 ຂອງຂໍ້ຕົກລົງສະບັບນີ້ ເປັນເຈົ້າໃນການຈັດຕັ້ງປະຕິບັດແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຕາມບັນດາໜ້າວຽກທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້ ໃຫ້ບັນລຸຕາມເປົ້າໝາຍ, ຕົວເລກຄາດໝາຍ ແລະ ສຳເລັດຕາມກຳນົດເວລາ ໂດຍປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ທຸກພາກສ່ວນໃນສັງຄົມ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

### ມາດຕາ 6 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ